| **ລາຍລະອຽດຂໍ້ມູນທີ່ໄດ້ຮັບ** | | |
|---|---|---|
| **ຊື່ໃບອະນຸຍາດ** | ໃບອະນຸຍາດດໍາເນີນກິດຈະການກໍ່ສ້າງທາງນໍ້າ | |
| **ປະເພດຂອງໃບອະນຸຍາດ** | ໃບອະນຸຍາດ | |
| **ເລກລະຫັດໃບອະນຸຍາດ** | **ວັນທີ** | **ໜ່ວຍງານຮັບຜິດຊອບ** |
| MoPWT-IWTD-7 | 26.09.2017 | ກົມໂຍທາທິການແລະຂົນສົ່ງທາງນໍ້າ |

| **ຂໍ້ມູນພື້ນຖານ** | |
|---|---|
| **ຮູບແບບການສົ່ງຄໍາຮ້ອງ** | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| **ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ** | ທຸກພາກສ່ວນ |
| **ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ** | ການກໍ່ສ້າງທີ່ບໍ່ເໝາະສົມ ຫລື ບໍ່ຖືກຕ້ອງ ໃນພື້ນທີ່ທາງນໍ້າດັ່ງກ່າວ ອາດກໍ່ໃຫ້ເກີດຄວາມສ່ຽງຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ໂດຍສະເພາະແມ່ນ ການປ່ຽນແປງຂອງກະແສນໍ້າ ດັ່ງນັ້ນ ຈຶ່ງຈໍາເປັນຕ້ອງໄດ້ມີການອອກການອະນຸຍາດນີ້ ເພື່ອຫລີກລ່ຽງ ແລະ ປ້ອງກັນຄວາມສ່ຽງດັ່ງກ່າວທີ່ອາດຈະເກີດຂຶ້ນ |
| **ຜູ້ທີ່ຕ້ອງຂໍໃບອະນຸຍາດ** | ບຸກຄົນ , ນິຕິບຸກຄົນ ຫລື ອົງການຈັດຕັ້ງໃດໜຶ່ງ ທີ່ມີຈຸດປະສົງ ດໍາເນີນກິດຈະການກໍ່ສ້າງທາງນໍ້າເຊິ່ງລວມມີ: ການກໍ່ສ້າງ ຢູ່ເທິງໜ້ານໍ້າ, ຢູ່ໃນນໍ້າ, ຢູ່ຕາມແຄມຕະຝັ່ງ, ຕາມຫາດ, ເກາະດອນ ແລະ ແຫລ່ງນໍ້າອື່ນ (ເຊັ່ນ ຂົວເຂື່ອນໄຟຟ້າ, ທ່າເຮືອ, ກິດຈະການປ້ອງກັນຕະຝັ່ງເຈື່ອນ, ສະຖານທີ່ເກັບມ້ຽນຫີນແຮ່ ແລະ ຊາຍ, ຄອງເດີນເຮືອ, ລວມທັງ ໂຮງແຮມ ແລະ ສິ່ງກໍ່ສ້າງອື່ນ, ກະຊັງລ້ຽງປາ) |
| **ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່?** | ບໍ່ມີ |
| **ທີ່ຢູ່ຂອງຂໍ້ມູນອອນລາຍ** | |
| **ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່?** | ບໍ່ມີ |
| **ຄໍາເຫັນອື່ນ ທີ່ຕິດພັນກັບ ໃບອະນຸຍາດ** | 1. ກະຊວງໂຍທາທິການ ແລະ ຂົນສົ່ງ ຂັ້ນສູນກາງ ເປັນຜູ້ພິຈາລະນາອະນຸມັດ ໂຄງການກໍ່ສ້າງຂະໜາດໃຫຍ່ ຫລື ໂຄງການທີ່ມີມູນຄ່າແຕ່ 50 ຕື້ກີບຂຶ້ນໄປ 2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫລວງ ເປັນຜູ້ພິຈາລະນາອະນຸມັດ ໂຄງການກໍ່ສ້າງຂະໜາດນ້ອຍ ແລະ ກາງ ຫລື ໂຄງການທີ່ມີມູນຄ່າ ນ້ອຍກວ່າ 50 ຕື້ກີບລົງມາ 3. ພາຍຫລັງທີ່ສໍາເລັດການກໍ່ສ້າງ, |

| ຂໍ້ມູນພື້ນຖານ | |
|---|---|
| | ເຈົ້າຂອງຕ້ອງແຈ້ງຕໍ່ຂະແໜງການໂຍທາທິການ ແລະ ຂົນສົ່ງ ທີ່ກ່ຽວຂ້ອງ ເພື່ອຊາບ ພາຍໃນກຳນົດເວລາ ບໍ່ເກີນ 15 ວັນ ເພື່ອລົງກວດກາເທື່ອສຸດທ້າຍ ແລະ ຫາກຖືກຕ້ອງ ຈະມີການອອກໃບຢັ້ງຢືນຄວາມຖືກຕ້ອງໃຫ້ ເປັນຫລັກຖານອີກເທື່ອໜຶ່ງ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການພິຈາລະນາຄຳຮ້ອງ ໃນການອອກໃບອະນຸຍາດ | 7 | 7 ວັນລັດຖະການ ພາຍຫລັງຈາກການຄົ້ນຄວ້າເອກະສານ ແລະ ການລົງກວດກາສະຖານທີ່ຢ່າງລະອຽດ |
| ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ | 1. ການກໍ່ສ້າງທາງນໍ້າ ຕ້ອງບໍ່ເປັນອັນຕະລາຍ ແລະ ກີດຂວາງການສັນຈອນທາງນໍ້າ, ຮັກສາຂອບຕະຝັ່ງເດີມໄວ້ໃຫ້ຫລາຍທີ່ສຸດ, ບໍ່ປິດບັງທັດສະນີຍະພາບຂອງແຫລ່ງນໍ້າ, ບໍ່ເຮັດໃຫ້ມີຜົນກະທົບ ໃນທາງລົບຕໍ່ສິ່ງແວດລ້ອມ ແລະ ລະບົບນິເວດວິທະຍາຂອງແຫລ່ງນໍ້າ, ບໍ່ເຮັດໃຫ້ກະແສນໍ້າ ມີການປ່ຽນແປງ ຫລື ປ່ຽນທິດທາງໄຫລ, ເຂດທີ່ຕັ້ງຕ້ອງບໍ່ຢູ່ໃນເຂດພື້ນທີ່ທີ່ລັດຖະບານມີແຜນພັດທະນາແລ້ວ 2. ການກໍ່ສ້າງດັ່ງກ່າວ ຕ້ອງປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານເຕັກນິກການກໍ່ສ້າງ ທີ່ກຳນົດໄວ້ ສະເພາະ ສຳລັບແຕ່ລະປະເພດ | |
| ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ? | ປະຕິເສດ ຖ້າການກໍ່ສ້າງດັ່ງກ່າວ ບໍ່ສອດຄ່ອງກັບ ຫລັກການພິຈາລະນາອະນຸມັດ ຫລື ບໍ່ສອດຄ່ອງກັບມາດຕະຖານທີ່ກຳນົດໄວ້ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ໃບອະນຸຍາດມີກຳນົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນຳໃຊ້ ຈັກເດືອນ?** |
| ແມ່ນແລ້ວ | 3 |
| **ຂັ້ນຕອນ ແລະ ເງື່ອນໄຂ ສຳລັບການຕໍ່ອາຍຸໃບອະນຸຍາດ** | ໃນກໍລະນີທີ່ການກໍ່ສ້າງບໍ່ໄດ້ຮັບການຈັດຕັ້ງປະຕິບັດຕາມກຳນົດເວລາດັ່ງກ່າວ, ເຈົ້າຂອງໂຄງການຕ້ອງໄດ້ຂໍຕໍ່ອາຍຸການນຳໃຊ້ຕື່ມອີກ ແຕ່ສາມາດຕໍ່ໄດ້ບໍ່ເກີນ 2 ຄັ້ງ ຖ້າເກີນກຳນົດນີ້ ໃບອະນຸຍາດດັ່ງກ່າວກໍ່ຈະມົດຄຸນຄ່າທັນທີ. |

| ຄ່າທຳນຽມ | | | | |
|---|---|---|---|---|
| **ມີຄ່າທຳນຽມ** | **ຄ່າບໍລິການວິຊາ** | **ຄ່າທຳນຽມ** | **ຄ່າ** | **ຄ່າໃຊ້ຈ່າຍທັງໝົດ** |

| ຄ່າທໍານຽມ | | | | |
|---|---|---|---|---|
| ແບບຟອມຄໍາ ຮ້ອງ ຫລື ບໍ່? | ການ | | ແບບຟອມ ຄໍາຮ້ອງ | |
| ແມ່ນແລ້ວ | 1000000.00 | 0.00 | 0.00 | 1000000.00 |
| ຄໍາເຫັນ | ອີງຕາມ: ລັດຖະບັນຍັດປະທານປະເທດ ເລກທີ 03/ປທ<br>ຄ່າທໍານຽມໃນການອອກໃບອະນຸຍາດແມ່ນ ການເກັບຄ່າກວດກາ,ຜ່ານແບບການກໍ່ສ້າງ<br>ແລະຢັ້ງລາຄາ ການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນ | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າ ແບບຟອມ ຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 1000000.00 | 0.00 | 0.00 | 1000000.00 |
| ຄໍາເຫັນ | ອີງຕາມ: ລັດຖະບັນຍັດປະທານປະເທດ ເລກທີ 03/ປທ ຄ່າທໍານຽມໃນການອອກໃບອະນຸຍາດແມ່ນ ການເກັບຄ່າກວດກາ,ຜ່ານແບບການກໍ່ສ້າງ ແລະຢັ້ງລາຄາ ການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນ | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| ຊື່ກົດລະບຽບ | ເລກທີ | ວັນທີ | ຄໍາເຫັນ |
| ຂໍ້ຕົກລົງວ່າດ້ວຍລະບຽບການກ່ຽວກັບການຄຸ້ມຄອງກິດຈະການກໍ່ສ້າງທາງນໍ້າ | 7736/ຍທຂ | 08.06.2010 | ໝວດທີ II ການຄຸ້ມຄອງໂຄງການກໍ່ສ້າງທາງນໍ້າ (ມາດຕາ 5 ຫາມາດຕາ 10) ໝວດທີ III ການກວດກາ ແລະ ການຢັ້ງຢືນຄວາມຖືກຕ້ອງ ຂອງການກໍ່ສ້າງ (ມາດຕາ 12) |

| ເອກະສານປະກອບ |
|---|
| ຊື່ເອກະສານ |
| ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ |

| ເອກະສານປະກອບ |
|---|
| ແຜນຜັງການກໍ່ສ້າງ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | | |